ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ 453/ທຫລ

ນະຄອນຫຼວງວຽງຈັນ, ວັນທີ 30 ພຶດສະພາ 2019

# ຂໍ້ຕົກລົງ
# ວ່າດ້ວຍ ການນຳທຶນ ເຂົ້າ-ອອກ ສປປ ລາວ ແລະ ການໃຫ້ກູ້ ຫຼື ຮັບເງິນກູ້ ແລະ ສິນເຊື່ອການຄ້າ ກັບຕ່າງປະເທດ

- ອີງຕາມກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ 47/ສພຊ, ລົງວັນທີ 19 ມິຖຸນາ 2018;
- ອີງຕາມກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 55/ສພຊ ລົງວັນທີ 22 ທັນວາ 2014;
- ອີງຕາມການຄົ້ນຄວ້າ ແລະ ນຳສະເໜີຂອງກົມນະໂຍບາຍເງິນຕາ.

## ຜູ້ວ່າການ ທະນາຄານແຫ່ງ ສປປ ລາວ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດບັນດາຫຼັກການ, ລະບຽບການ ແລະ ຂັ້ນຕອນໃນການຢັ້ງຢືນທຶນ ແລະ ການໃຫ້ກູ້ ຫຼື ຮັບເງິນກູ້ ແລະ ສິນເຊື່ອການຄ້າ ກັບຕ່າງປະເທດ ເພື່ອຜັນຂະຫຍາຍເນື້ອໃນຂອງ ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ. ແນໃສ່ເຮັດໃຫ້ການເຄື່ອນໄຫວຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ສອດຄ່ອງຕາມກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ, ປະກອບສ່ວນໃນການຄຸ້ມຄອງເງິນຕາຕ່າງປະເທດໃຫ້ມີປະສິດທິຜົນ.

**ມາດຕາ 2 ການນຳທຶນ ເຂົ້າ-ອອກ ສປປ ລາວ**

ການນຳທຶນ ເຂົ້າ-ອອກ ສປປ ລາວ ແມ່ນການນຳທຶນເຂົ້າຂອງນັກລົງທຶນຈາກຕ່າງປະເທດ ເພື່ອມາດຳເນີນທຸລະກິດໃດໜຶ່ງທີ່ຖືກຕ້ອງຕາມກົດໝາຍ ຢູ່ ສປປ ລາວ ແລະ ການນຳທຶນອອກໄປລົງທຶນໃນທຸລະກິດໃດໜຶ່ງທີ່ຖືກຕ້ອງຕາມກົດໝາຍ ຢູ່ ຕ່າງປະເທດ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຢູ່ ສປປ ລາວ. ການນຳທຶນເຂົ້າ-ອອກ ສປປ ລາວ ຈະຕ້ອງໄດ້ຮັບການຢັ້ງຢືນການນຳທຶນເຂົ້າມາລົງທຶນຢູ່ ສປປ ລາວ ແລະ ໄດ້ຮັບອະນຸຍາດນຳທຶນອອກໄປລົງທຶນ

ຢູ່ຕ່າງປະເທດ ຈາກທະນາຄານແຫ່ງ ສປປ ລາວ, ຊຶ່ງທຶນດັ່ງກ່າວ ປະກອບດ້ວຍ ທຶນທີ່ເປັນເງິນໂອນຜ່ານລະບົບທະນາຄານ, ທຶນເປັນວັດຖຸ ແລະ ທຶນເປັນເງິນສົດທີ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ.

**ມາດຕາ 3 ການໃຫ້ ຫຼື ຮັບເງິນກູ້ ແລະ ສິນເຊື່ອການຄ້າ ກັບຕ່າງປະເທດ**

ການໃຫ້ ຫຼື ຮັບເງິນກູ້ ກັບຕ່າງປະເທດ ແມ່ນການກູ້ຢືມເງິນຈາກຕ່າງປະເທດ ຫຼື ການໃຫ້ກູ້ຢືມເງິນແກ່ຕ່າງປະເທດ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ຢູ່ ສປປ ລາວ ເພື່ອມາເຄື່ອນໄຫວທຸລະກິດຂອງຕົນ ຫຼື ເພື່ອສະໜອງເງິນກູ້ໃຫ້ແກ່ຫົວໜ່ວຍທຸລະກິດທີ່ຢູ່ຕ່າງປະເທດ.

ການໃຫ້ ຫຼື ຮັບສິນເຊື່ອການຄ້າ ກັບຕ່າງປະເທດ ແມ່ນການນຳເອົາສິນຄ້າ ຫຼື ນຳໃຊ້ການບໍລິການກ່ອນການຊຳລະເງິນ ຫຼື ອາດຊຳລະບາງສ່ວນ (ຕິດໜີ້) ໂດຍການເຮັດສັນຍາລະຫວ່າງ ຜູ້ໃຫ້ສິນເຊື່ອ ແລະ ຜູ້ຮັບສິນເຊື່ອການຄ້າ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງນຳທຶນເຂົ້າມາລົງທຶນຢູ່ ສປປ ລາວ ຫຼື ນຳທຶນອອກໄປລົງທຶນ ຢູ່ຕ່າງປະເທດ, ລວມທັງ ການໃຫ້ ຫຼື ຮັບເງິນກູ້ ແລະ ສິນເຊື່ອການຄ້າ ກັບຕ່າງປະເທດ.

## ໝວດທີ 2
## ການນຳທຶນ ເຂົ້າ-ອອກ ສປປ ລາວ

**ມາດຕາ 5 ການນຳທຶນເຂົ້າມາລົງທຶນ ຢູ່ ສປປ ລາວ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຂອງຕ່າງປະເທດ ທີ່ໄດ້ຮັບອະນຸຍາດລົງທຶນ ຢ່າງຖືກຕ້ອງຕາມກົດ ໝາຍ ຢູ່ ສປປ ລາວ ຕ້ອງນຳທຶນເຂົ້າມາ ສປປ ລາວ ແລະ ຕ້ອງສະເໜີຂໍຢັ້ງຢືນການນຳເຂົ້າທຶນຈາກຕ່າງປະເທດ ເພື່ອມາດຳເນີນທຸລະກິດ ຢູ່ ສປປ ລາວ ນຳທະນາຄານແຫ່ງ ສປປ ລາວ ເປັນປະຈຳປີ ຈົນກວ່າຈະນຳເງິນທຶນເຂົ້າມາຄົບຖ້ວນຕາມທີ່ໄດ້ຮັບອະນຸຍາດລົງທຶນ, ຊຶ່ງການສະເໜີຂໍໃບຢັ້ງຢືນການນຳທຶນເຂົ້າມາລົງທຶນ ຢູ່ ສປປ ລາວ ຕ້ອງປະກອບສຳນວນເອກະສານ ດັ່ງນີ້:

1. ໃບຄຳຮ້ອງ ຕາມແບບພິມຂອງທະນາຄານແຫ່ງ ສປປ ລາວ;
2. ສຳເນົາໃບທະບຽນວິສາຫະກິດ ແລະ ໃບອະນຸຍາດດຳເນີນທຸລະກິດທີ່ກ່ຽວຂ້ອງ;
3. ເອກະສານທີ່ກ່ຽວຂ້ອງຕາມແຕ່ລະກໍລະນີການນຳທຶນເຂົ້າມາ ສປປ ລາວ ທີ່ໄດ້ກຳນົດໄວ້ໃນຂໍ້ ກ ແລະ ຂໍ້ ຂ ດັ່ງນີ້:

ກ. ການນຳທຶນເຂົ້າ ທີ່ເປັນເງິນໂອນຜ່ານລະບົບທະນາຄານ ແລະ ເງິນສົດ

- ໃບແຈ້ງເງິນເຂົ້າບັນຊີເງິນຝາກ (Avis Credit Note) ຫຼື ໃບລາຍງານບັນຊີສຳຮອງ (Statement);
- ສຳເນົາໃບອະນຸຍາດກູ້ຢືມເງິນຈາກຕ່າງປະເທດ ອອກໂດຍທະນາຄານແຫ່ງ ສປປ ລາວ (ກໍລະນີນຳທຶນທີ່ເປັນເງິນກູ້ເຂົ້າມາ);
- ໃບຢັ້ງຢືນການນຳເງິນສົດຕິດຕົວຜູ້ໂດຍສານ ເຂົ້າ ສປປ ລາວ ຈາກເຈົ້າໜ້າທີ່ພາສີປະຈຳດ່ານຊາຍແດນ ຫຼື ດ່ານສາກົນ (ກໍລະນີນຳທຶນທີ່ເປັນເງິນສົດນຳເຂົ້າມາ);

ຂ. ການນຳທຶນເຂົ້າ ທີ່ເປັນວັດຖຸ

- ສຳເນົາໃບຢັ້ງຢືນການຊຳລະຄ່າສິນຄ້າ;

- ສຳເນົາໃບແຈ້ງພາສີນຳເຂົ້າເປັນລາຍລະອຽດ.

ການຢັ້ງຢືນການນຳທຶນຈາກຕ່າງປະເທດ ເພື່ອມາດຳເນີນທຸລະກິດ ຢູ່ ສປປ ລາວ ສຳລັບຜູ້ລົງທຶນຕ່າງປະເທດ ທີ່ໄດ້ຮັບອະນຸຍາດລົງທຶນ ຫຼື ຂຶ້ນທະບຽນວິສາຫະກິດ ຈາກຂະແໜງການກ່ຽວຂ້ອງຢູ່ສູນກາງ ສາມາດສະເໜີຂໍການຢັ້ງຢືນ ນຳກົມນະໂຍບາຍເງິນຕາ ທະນາຄານແຫ່ງ ສປປ ລາວ. ສຳລັບຜູ້ລົງທຶນຕ່າງປະເທດ ທີ່ໄດ້ຮັບອະນຸຍາດລົງທຶນ ຫຼື ຂຶ້ນທະບຽນວິສາຫະກິດ ຈາກຂະແໜງການກ່ຽວຂ້ອງຢູ່ຂັ້ນແຂວງ ສາມາດສະເໜີຂໍການຢັ້ງຢືນ ນຳທະນາຄານແຫ່ງ ສປປ ລາວ ປະຈຳພາກ ທີ່ສຳນັກງານໃຫຍ່ຂອງຕົນຕັ້ງຢູ່ພາຍໃຕ້ຂອບເຂດການຄຸ້ມຄອງຂອງ ທະນາຄານແຫ່ງ ສປປ ລາວ ປະຈຳພາກນັ້ນ.

## ມາດຕາ 6 ການນຳທຶນອອກໄປລົງທຶນ ຢູ່ຕ່າງປະເທດ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຢູ່ ສປປ ລາວ ທີ່ມີຈຸດປະສົງນຳທຶນອອກໄປລົງທຶນ ຢູ່ຕ່າງປະເທດ ຕ້ອງສະເໜີຂໍອະນຸຍາດນຳທຶນອອກໄປລົງທຶນຢູ່ຕ່າງປະເທດ ນຳກົມນະໂຍບາຍເງິນຕາ ທະນາຄານແຫ່ງ ສປປ ລາວ ໂດຍປະກອບສຳນວນເອກະສານ ດັ່ງນີ້ :

- ໃບຄຳຮ້ອງ ຕາມແບບພິມຂອງທະນາຄານແຫ່ງ ສປປ ລາວ;
- ສຳເນົາໃບອະນຸຍາດອອກໄປລົງທຶນຢູ່ຕ່າງປະເທດ ອອກໂດຍກະຊວງແຜນການ ແລະ ການລົງທຶນ (ກໍລະນີເປັນການລົງທຶນ ໂດຍກົງຢູ່ຕ່າງປະເທດ);
- ສຳເນົາໃບອະນຸຍາດອອກໄປລົງທຶນໃນຫຼັກຊັບຢູ່ຕ່າງປະເທດ ອອກໂດຍສຳນັກງານຄຸ້ມຄອງຫຼັກຊັບ (ກໍລະນີເປັນການລົງທຶນໃນຫຼັກຊັບ ຢູ່ຕ່າງປະເທດ)
- ສຳເນົາໃບອະນຸຍາດລົງທຶນຈາກຕ່າງປະເທດ ອອກໂດຍອົງການຈັດຕັ້ງທີ່ກ່ຽວຂ້ອງຂອງປະເທດທີ່ໄປລົງທຶນ (ຖ້າມີ);
- ສຳເນົາໃບທະບຽນວິສາຫະກິດ ແລະ ໃບອະນຸຍາດດຳເນີນທຸລະກິດ (ສຳລັບນິຕິບຸກຄົນ);
- ສຳເນົາໃບຢັ້ງຢືນການມອບພັນທະອາກອນ ປະຈຳປີ;
- ແຜນການໂອນເງິນລົງທຶນອອກ ເປັນແຕ່ລະງວດ/ປີ ແລະ ວົງເງິນທີ່ຈະໂອນໄປລົງທຶນ;
- ສຳເນົາໃບລາຍງານບັນຊີສຳຮອງ (Statement) ຍ້ອນຫຼັງ 3 ປີ;
- ສຳເນົາໃບຢັ້ງຢືນການນຳທຶນເຂົ້າ ເພື່ອມາດຳເນີນທຸລະກິດ ຢູ່ ສປປ ລາວ ປີຫຼ້າສຸດ (ສຳລັບນິຕິບຸກຄົນທີ່ເປັນການລົງທຶນຈາກຕ່າງປະເທດ).

## ມາດຕາ 7 ການພິຈາລະນາອະນຸຍາດ

ທະນາຄານແຫ່ງ ສປປ ລາວ ຈະຄົ້ນຄວ້າພິຈາລະນາ ແລະ ແຈ້ງຕອບຜົນການສະເໜີຂໍຢັ້ງຢືນການນຳທຶນເຂົ້າມາລົງທຶນ ຢູ່ ສປປ ລາວ ຫຼື ການນຳທຶນອອກໄປລົງທຶນ ຢູ່ຕ່າງປະເທດ ພາຍໃນກຳນົດເວລາ 10 ວັນລັດຖະການ ນັບແຕ່ວັນທີ່ໄດ້ຮັບສຳນວນຄຳຮ້ອງຖືກຕ້ອງ ແລະ ຄົບຖ້ວນ ເປັນຕົ້ນໄປ. ກໍລະນີທີ່ບໍ່ມີເອກະສານຫຼັກຖານຢັ້ງຢືນການນຳທຶນເຂົ້າມາ ສປປ ລາວ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 5 ແລະ 6 ຂອງຂໍ້ຕົກລົງສະບັບນີ້ ຈະບໍ່ໄດ້ຮັບການພິຈາລະນາ.

ນອກຈາກເອກະສານທີ່ໄດ້ກຳນົດໄວ້ໃນມາດຕາ 6 ແລະ 7, ທະນາຄານແຫ່ງ ສປປ ລາວ ສາມາດຮຽກເອົາເອກະສານອື່ນ ທີ່ກ່ຽວຂ້ອງກັບການນຳທຶນ ເຂົ້າ-ອອກ ສປປ ລາວ ໃນກໍລະນີທີ່ເຫັນວ່າ ຂໍ້ມູນທີ່ໄດ້ມາຍັງບໍ່ພຽງພໍໃນການຄົ້ນຄວ້າພິຈາລະນາ.

ຜູ້ທີ່ໄດ້ຮັບໃບຢັ້ງຢືນຢັ້ງຢືນການນຳທຶນເຂົ້າ ເພື່ອມາດຳເນີນທຸລະກິດ ຢູ່ ສປປ ລາວ ຫຼື ການນຳທຶນອອກໄປລົງທຶນຢູ່ຕ່າງປະເທດ ຕ້ອງເສຍຄ່າຄົ້ນຄວ້າເອກະສານ ຈຳນວນ 50.000 ກີບ/ຄັ້ງ.

## ໝວດທີ 3
## ການໃຫ້ກູ້ ຫຼື ຮັບ ເງິນກູ້ ແລະ ສິນເຊື່ອການຄ້າ ກັບຕ່າງປະເທດ

### ມາດຕາ 8 ການໃຫ້ກູ້ ຫຼື ຮັບເງິນກູ້ ຈາກຕ່າງປະເທດ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຢູ່ ສປປ ລາວ ທີ່ມີຈຸດປະສົງ ໃຫ້ ຫຼື ຮັບເງິນກູ້ຈາກຕ່າງປະເທດ ຕ້ອງສະເໜີຂໍອະນຸຍາດຈາກ ກົມນະໂຍບາຍເງິນຕາ ທະນາຄານແຫ່ງ ສປປ ລາວ ໂດຍປະກອບສຳນວນເອກະສານ ດັ່ງລາຍລະອຽດລຸ່ມນີ້:

- ໃບຄຳຮ້ອງຂໍອະນຸຍາດກູ້ຢືມເງິນຈາກຕ່າງປະເທດ ຕາມແບບພິມຂອງທະນາຄານແຫ່ງ ສປປ ລາວ;
- ຮ່າງສັນຍາການກູ້ຢືມເງິນ;
- ແຜນການນຳໃຊ້ເງິນກູ້;
- ແຜນການເບີກຖອນເງິນ ແລະ ຊຳລະໜີ້ເງິນກູ້ (ກໍລະນີຮັບເງິນກູ້);
- ແຜນລາຍຮັບ-ລາຍຈ່າຍ ຂອງບໍລິສັດ ນັບແຕ່ວັນກູ້ຢືມເງິນຈາກຕ່າງປະເທດ ຈົນຮອດວັນສິ້ນສຸດການຊຳລະໜີ້ເງິນກູ້ (ກໍລະນີຮັບເງິນກູ້);
- ໃບລາຍງານບັນຊີສຳຮອງ Statement (ກໍລະນີໃຫ້ກູ້ຢືມ);
- ສຳເນົາໃບຢັ້ງຢືນການນຳທຶນເຂົ້າມາລົງທຶນ ຢູ່ ສປປ ລາວ ປີຫຼ້າສຸດ (ສຳລັບນິຕິບຸກຄົນທີ່ເປັນການລົງທຶນຈາກຕ່າງປະເທດ);
- ສຳເນົາໃບທະບຽນວິສາຫະກິດ ຫຼື ໃບອະນຸຍາດດຳເນີນທຸລະກິດທີ່ກ່ຽວຂ້ອງ;
- ສຳເນົາໃບຢັ້ງຢືນການມອບພັນທະອາກອນປະຈຳປີ.

### ມາດຕາ 9 ການໃຫ້ ຫຼື ຮັບ ສິນເຊື່ອການຄ້າ ກັບຕ່າງປະເທດ

ນິຕິບຸກຄົນ ແລະ ການຈັດຕັ້ງ ຢູ່ ສປປ ລາວ ທີ່ມີຈຸດປະສົງໃຫ້ ຫຼື ຮັບ ສິນເຊື່ອການຄ້າ ກັບຕ່າງປະເທດ ຕ້ອງສະເໜີຂໍອະນຸຍາດຈາກ ກົມນະໂຍບາຍເງິນຕາ ທະນາຄານແຫ່ງ ສປປ ລາວ ໂດຍປະກອບສຳນວນເອກະສານ ດັ່ງນີ້:

- ໃບຄຳຮ້ອງຂໍອະນຸຍາດ ໃຫ້ ຫຼື ຮັບ ສິນເຊື່ອການຄ້າ ກັບຕ່າງປະເທດ ຕາມແບບພິມຂອງທະນາຄານແຫ່ງ ສປປ ລາວ;
- ຮ່າງສັນຍາ ການໃຫ້ ຫຼື ຮັບສິນເຊື່ອການຄ້າ;
- ແຜນການສົ່ງອອກ ຫຼື ນຳເຂົ້າ ສິນຄ້າ;
- ແຜນຮັບຊຳລະ ຫຼື ຊຳລະ ສິນເຊື່ອການຄ້າ;
- ແຜນລາຍຮັບ-ລາຍຈ່າຍ ຂອງບໍລິສັດ ນັບແຕ່ວັນຕິດໜີ້ສິນເຊື່ອການຄ້າ ຈົນຮອດວັນສິ້ນສຸດການຊຳລະສິນເຊື່ອການຄ້າ (ກໍລະນີຮັບສິນເຊື່ອການຄ້າ);
- ສຳເນົາໃບຢັ້ງຢືນການນຳທຶນເຂົ້າມາລົງທຶນ ຢູ່ ສປປ ລາວ ປີຫຼ້າສຸດ (ສຳລັບນິຕິບຸກຄົນທີ່ເປັນການລົງທຶນຈາກຕ່າງປະເທດ);

- ສຳເນົາໃບອະນຸຍາດດຳເນີນທຸລະກິດ ອອກໂດຍຂະແໜງການທີ່ກ່ຽວຂ້ອງ;
- ສຳເນົາໃບທະບຽນວິສາຫະກິດ ຫຼື ໃບອະນຸຍາດລົງທຶນ;
- ສຳເນົາໃບຢັ້ງຢືນການມອບພັນທະອາກອນປະຈຳປີ.

**ມາດຕາ 10 ການຄຸ້ມຄອງການໃຫ້ ຫຼື ຮັບ ເງິນກູ້ ແລະ ສິນເຊື່ອການຄ້າ ກັບຕ່າງປະເທດ**

ທະນາຄານແຫ່ງ ສປປ ລາວ ເປັນຜູ້ຄຸ້ມຄອງການໃຫ້ກູ້ ຫຼື ຮັບເງິນກູ້ ແລະ ສິນເຊື່ອການຄ້າ ກັບຕ່າງປະເທດ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ບໍ່ແມ່ນທະນາຄານທຸລະກິດ ແລະ ສະຖາບັນການເງິນ ແຕ່ທະນາຄານແຫ່ງ ສປປ ລາວ ຈະບໍ່ຄ້ຳປະກັນການໃຫ້ກູ້ ຫຼື ຮັບ ເງິນກູ້ ແລະ ສິນເຊື່ອການຄ້າ ກັບຕ່າງປະເທດ ດັ່ງກ່າວ.

ລັດວິສາຫະກິດ ທີ່ມີຈຸດປະສົງໃຫ້ກູ້ ຫຼື ຮັບ ເງິນກູ້ ແລະ ສິນເຊື່ອການຄ້າ ກັບຕ່າງປະເທດ ຕ້ອງໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ ບົນພື້ນຖານການເຫັນດີຈາກຂະແໜງການທີ່ກ່ຽວຂ້ອງ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ໄດ້ຮັບອະນຸຍາດໃຫ້ ກູ້ຢືມເງິນຈາກຕ່າງປະເທດ ຕ້ອງນຳເງິນກູ້ດັ່ງກ່າວ ເຂົ້າມາຝາກໄວ້ບັນຊີເງິນຝາກຂອງຕົນທີ່ເປີດໄວ້ນຳທະນາຄານທຸລະກິດ ຢູ່ ສປປ ລາວ ແລະ ແລກປ່ຽນເປັນເງິນກີບ ເພື່ອນຳໃຊ້ຢູ່ ສປປ ລາວ.

ທະນາຄານທຸລະກິດ ແລະ ສະຖາບັນການເງິນ ທີ່ມີຈຸດປະສົງ ໃຫ້ກູ້ ຫຼື ຮັບ ເງິນກູ້ ກັບຕ່າງປະເທດ ຕ້ອງສະເໜີຂໍອະນຸຍາດ ຈາກກົມຄຸ້ມຄອງທະນາຄານທຸລະກິດ ແລະ ກົມຄຸ້ມຄອງສະຖາບັນການເງິນ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 11 ການພິຈາລະນາການສະເໜີຂໍອະນຸຍາດ**

ກົມນະໂຍບາຍເງິນຕາ ທະນາຄານແຫ່ງ ສປປ ລາວ ຈະຄົ້ນຄວ້າພິຈາລະນາ ແລະ ແຈ້ງຕອບຜົນການສະເໜີຂໍອະນຸຍາດໃຫ້ກູ້ ຫຼື ຮັບເງິນກູ້ ແລະ ສິນເຊື່ອການຄ້າກັບຕ່າງປະເທດ ໃຫ້ແກ່ຜູ້ສະເໜີ ພາຍໃນກຳນົດເວລາ 10 ວັນລັດຖະການ ນັບແຕ່ວັນທີ່ໄດ້ຮັບສຳນວນຄຳຮ້ອງຖືກຕ້ອງ ແລະ ຄົບຖ້ວນ ເປັນຕົ້ນໄປ.

ນອກຈາກເອກະສານທີ່ໄດ້ກຳນົດໄວ້ໃນມາດຕາ 8 ແລະ 9, ກົມນະໂຍບາຍເງິນຕາ ທະນາຄານແຫ່ງ ສປປ ລາວ ສາມາດຮຽກເອົາເອກະສານອື່ນ ທີ່ກ່ຽວຂ້ອງກັບການໃຫ້ ຫຼື ຮັບ ເງິນກູ້ ແລະ ສິນເຊື່ອການຄ້າ ກັບຕ່າງປະເທດ ໃນກໍລະນີທີ່ເຫັນວ່າ ຂໍ້ມູນທີ່ໄດ້ມາຍັງບໍ່ພຽງພໍໃນການຄົ້ນຄວ້າພິຈາລະນາ.

ຜູ້ທີ່ໄດ້ຮັບອະນຸຍາດ ໃຫ້ ຫຼື ຮັບ ເງິນກູ້ ແລະ ສິນເຊື່ອການຄ້າ ກັບຕ່າງປະເທດ ຕ້ອງເສຍຄ່າຄົ້ນຄວ້າເອກະສານ ຈຳນວນ 100.000 ກີບ/ໃບອະນຸຍາດ.

**ມາດຕາ 12 ການລາຍງານ**

ຜູ້ທີ່ໄດ້ຮັບອະນຸຍາດ ໃຫ້ກູ້ ຫຼື ຮັບເງິນກູ້ ກັບຕ່າງປະເທດ ຕ້ອງເຄື່ອນໄຫວເງິນກູ້ຂອງຕົນຜ່ານລະບົບທະນາຄານ ແລະ ຕ້ອງລາຍງານການປະຕິບັດສັນຍາເງິນກູ້ ນັບແຕ່ການເບີກຖອນ ແລະ ການນຳໃຊ້ເງິນກູ້ ຈົນກວ່າຈະຊຳລະຄືນຢ່າງຄົບຖ້ວນຕາມສັນຍາ ໃຫ້ທະນາຄານແຫ່ງ ສປປ ລາວ ຊາບຢ່າງເປັນປົກກະຕິ.

ຜູ້ທີ່ໄດ້ຮັບອະນຸຍາດ ໃຫ້ ຫຼື ຮັບ ສິນເຊື່ອການຄ້າ ກັບຕ່າງປະເທດ ຕ້ອງຊຳລະສິນເຊື່ອການຄ້າຂອງຕົນຜ່ານລະບົບທະນາຄານ ແລະ ຕ້ອງລາຍງານການປະຕິບັດສັນຍາສິນເຊື່ອການຄ້າ ນັບແຕ່ການຮັບ ແລະ ຊຳລະສິນເຊື່ອການຄ້າ ຈົນກວ່າຈະຊຳລະຢ່າງຄົບຖ້ວນຕາມສັນຍາ ໃຫ້ທະນາຄານແຫ່ງ ສປປ ລາວ ຊາບຢ່າງເປັນປົກກະຕິ.

ຜູ້ທີ່ໄດ້ຮັບອະນຸຍາດ ໃຫ້ກູ້ ຫຼື ຮັບເງິນກູ້ ແລະ ສິນເຊື່ອການຄ້າ ກັບຕ່າງປະເທດ ທີ່ບໍ່ປະຕິບັດຕາມລະບຽບການລາຍງານ ຫຼື ຂາດການລາຍງານ, ທະນາຄານແຫ່ງ ສປປ ລາວ ຈະບໍ່ພິຈາລະນາ ການໃຫ້ກູ້ ຫຼື ຮັບເງິນກູ້ ແລະ ສິນເຊື່ອການຄ້າ ກັບຕ່າງປະເທດ ໃນບ້ອງໃໝ່ ຈົນກວ່າຈະປະຕິບັດການລາຍງານຢ່າງເປັນປົກກະຕິ.

## ໝວດທີ 4
## ຂໍ້ຫ້າມ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 13 ຂໍ້ຫ້າມ

ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ໃຫ້ກູ້ ຫຼື ຮັບເງິນກູ້ ແລະ ສິນເຊື່ອການຄ້າ ກັບຕ່າງປະເທດ ກ່ອນການໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ;
2. ຂາດການລາຍງານການປະຕິບັດສັນຍາເງິນກູ້ ຫຼື ສິນເຊື່ອການຄ້າກັບຕ່າງປະເທດ;
3. ປົດບັງຂໍ້ມູນ ຫຼື ລາຍງານຂໍ້ມູນບໍ່ຖືກຕ້ອງຕາມຄວາມເປັນຈິງ ແລະ ນຳໃຊ້ເງິນກູ້ບໍ່ສອດຄ່ອງຕາມຈຸດປະສົງໃນການກູ້ຢືມ;
4. ມີພຶດຕິກຳອື່ນ ທີ່ເປັນການລະເມີດຂໍ້ຕົກລົງສະບັບນີ້, ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ.

### ມາດຕາ 14 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກກ່າວເຕືອນ ແລະ ປະຕິບັດມາດຕະການປັບໃໝ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 47 ແລະ 49 ຂອງກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ, ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

### ມາດຕາ 15 ການຈັດຕັ້ງປະຕິບັດ

ກົມນະໂຍບາຍເງິນຕາ, ກົມຄຸ້ມຄອງທະນາຄານທຸລະກິດ, ກົມຄຸ້ມຄອງສະຖາບັນການເງິນ ແລະ ທະນາຄານແຫ່ງ ສປປ ລາວ ປະຈຳພາກ ມີໜ້າທີ່ຄຸ້ມຄອງ ແລະ ຕິດຕາມການຈັດຕັ້ງປະຕິບັດຕາມຂໍ້ຕົກລົງສະບັບນີ້.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຢູ່ ສປປ ລາວ ມີໜ້າທີ່ໃຫ້ການຮ່ວມມື ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

### ມາດຕາ 16 ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ບັນດາຂໍ້ຕົກລົງ ຫຼື ລະບຽບການໃດທີ່ນຳໃຊ້ໃນເມື່ອກ່ອນ ຫາກຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ຜູ້ວ່າການ ທະນາຄານແຫ່ງ ສປປ ລາວ

ສອນໄຊ ສິດພະໄຊ